# ການປະເມີນຜົນກະທົບໃນເບື້ອງຕົ້ນ
# PRELIMIARY IMPACT ASSESSMET (PIA)

**ໝາຍເຫດ:** ຍ້ອນການຊີ້ນໍາຂອງລັດຖະບານ ແລະ ສະພາແຫ່ງຊາດ ໃຫ້ມີການປັບປຸງກົດໝາຍວ່າດ້ວຍວິສາຫະກິດ ຢ່າງຮີບດ່ວນ. ຈຶ່ງເຮັດໃຫ້ບໍ່ສາມາດຮັບຮອງກ່ຽວກັບການເຮັດການຄົ້ນຄວ້າ ແລະ ວິເຄາະໄດ້ທັງໝົດ ຫຼື ບໍ່ສາມາດເຮັດໃຫ້ສໍາເລັດບາງພາກຂອງການປະເມີນຜົນກະທົບເບື້ອງຕົ້ນ Preliminary Impact Assessment (PIA).

ການປະເມີນຜົນກະທົບໃນເບື້ອງຕົ້ນ (PIA) ແມ່ນເປັນພຽງໄລຍະທໍາອິດ ໃນການປະເມີນຜົນກະທົບທີ່ບົ່ມຊ້ອນຂອງນິຕິກໍາຕ່າງໆຕໍ່ທຸລະກິດ, ສັງຄົມ ແລະ ການຄຸ້ມຄອງ ມະຫາພາກ ຊຶ່ງມັນຊ່ວຍກໍານົດວ່າຈະມີຄວາມຈໍາເປັນ ທີ່ຈະເຮັດບົດສະເໜີກ່ຽວກັບການປະເມີນຜົນກະທົບຂອງນິຕິກໍາ Regulatory Impact Statement (RIS) ຫຼື ບໍ?.

ມີຄວາມຮຽກຮ້ອງຈະຕ້ອງໄດ້ເຮັດ ການປະເມີນຜົນກະທົບ (PIA) ໃຫ້ສໍາເລັດສໍາລັບທຸກນິຕິກໍາທີ່ສະເໜີພາຍໃຕ້ກອບການປະເມີນຜົນ Regulatory Impact Assessment (RIA) ທີ່ໄດ້ເຫັນດີນໍາກັນ. ໃນເບື້ອງຕົ້ນ, ການປະເມີນຜົນກະທົບຂອງລະບຽບກົດໝາຍຕໍ່ທຸລະກິດ (RIA) ແມ່ນຈະນໍາໃຊ້ຕໍ່ກັບກົດໝາຍ ແລະ ດໍາລັດ ທີ່ສະເໜີທີ່ມີຜົນກະທົບຕໍ່ທຸລະກິດເທົ່ານັ້ນ. ນິຕິກໍາໃນຂົງເຂດອື່ນໆ (ລວມທັງລະບຽບການໃນຮູບແບບເຄື່ອງມືອື່ນໆ ເຊັ່ນ: ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ, ຫຼື ທີ່ມີຜົນກະທົບຕໍ່ສ່ວນບຸກຄົນ/ສັງຄົມ ຫຼື ລັດຖະບານແຕ່ບໍ່ແມ່ນທຸລະກິດ) ອາດຈະນໍາໃຊ້ລະບົບ (RIA) ໃນການປະເມີນແຕ່ຂຶ້ນກັບການຕັດສິນໃຈຂອງພະນັກງານຮັບຜິດຊອບວຽກງານດັ່ງກ່າວ, ເຊິ່ງອາດຈະນໍາໃຊ້ (RIA) ສໍາຫຼັບນິຕິກໍາໃນຂົງເຂດອື່ນໃນໄລຍະຕໍ່ໄປ.

ພາຍໃຕ້ກອບວຽກໃນໄລຍະເລີ່ມຕົ້ນນີ້, ຈະເຮັດການປະເມີນ (RIS) ເມື່ອການປະເມີນຜົນ (PIA) ພົບວ່ານິຕິກໍາທີ່ສະເໜີນັ້ນມີແນວໂນ້ມທີ່ຈະສົ່ງຜົນກະທົບທີ່ສໍາຄັນຕໍ່ທຸລະກິດຕ່າງໆ.

ສໍາຫຼັບການປະເມີນນິຕິກໍາທີ່ສະເໜີ ຖ້າພົບວ່າບໍ່ມີແນວໂນ້ມທີ່ຈະສົ່ງຜົນກະທົບທີ່ສໍາຄັນຕໍ່ທຸລະກິດ, ການປະເມີນ PIA ກໍ່ແມ່ນໃຫ້ຂໍ້ມູນເພື່ອຕື່ມໃສ່ໃນບົດສະຫຼຸບການປະເມີນຜົນລະບຽບກົດໝາຍ RAS ເຊິ່ງຈະຕິດຄັດມາກັບນິຕິກໍາທີ່ສະເໜີໃຫ້ຜູ້ທີ່ເຮັດການຕັດສິນໃຈເພື່ອອະນຸມັດ.

| | |
|---|---|
| ຊື່ຂອງນິຕິກໍາທີ່ສະເໜີ | ກົດໝາຍວ່າດ້ວຍວິສາຫະກິດ (ປັບປຸງ)<br>- ການປະເມີນຜົນຂັ້ນຕອນການຂຶ້ນທະບຽນວິສາຫະກິດ |
| ກະຊວງ | ກະຊວງອຸດສາຫະກໍາ ແລະ ການຄ້າ |
| ກົມກອງ | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ |
| ພະນັກງານຜູ້ຕິດຕໍ່ພົວພັນ | ຊື່: ທ່ານ ສຸລິຄໍາ ແຈ້ງສະຫວ່າງ |
| | ໂທລະສັບ: 21412011 |
| | ອີເມລ:kongslk@yahoo.com |
| ປະເພດຂອງນິຕິກໍາ | ກົດໝາຍ |

**ສະຫຼຸບກ່ຽວກັບເງື່ອນໄຂຄວາມຕ້ອງການຂອງນິຕິກໍາ**

ເງື່ອນໄຂຄວາມຕ້ອງການຂອງນິຕິກໍາແມ່ນ ມາດຕະການ ຫຼື ຂໍ້ມູນໃດໜຶ່ງທີ່ທຸລະກິດ, ລັດຖະບານ ຫຼື ບຸກຄົນໃດໜຶ່ງທີ່ຈະຕ້ອງປະຕິບັດຕາມ.

| **ທັງໝົດ** | # |
|---|---|
| ຈໍານວນເງື່ອນໄຂຄວາມຕ້ອງການທີ່ນິຕິກໍາສະບັບນີ້ສະເໜີເພີ່ມເຕີມມີ | 3 |
| ຈໍານວນເງື່ອນໄຂຄວາມຕ້ອງການທີ່ນິຕິກໍານີ້ຕັດອອກມີ (ໃນເວລາທີ່ທົບທວນຄືນນິຕິກໍາສະບັບເກົ່າ) | - 4 |
| ລວມການປ່ຽນແປງສຸດທິ | - 1 |

| | |
|---|---|
| **ປະຫວັດຄວາມເປັນມາ** | |
| ຂໍ້ມູນພື້ນຖານ | ບົດປະເມີນຜົນກະທົບເບື້ອງຕົ້ນ PIA ແມ່ນຖືກກະກຽມໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005 ໂດຍສະເພາະແມ່ນ ພາກທີ II, ໝວດທີ 1 ແລະ ໝວດທີ 2 ໂດຍເນັ້ນໃສ່ການແຈ້ງຂຶ້ນທະບຽນວິສາຫະກິດ.<br>ບົດປະເມີນຜົນກະທົບ ສະບັບນີ້ ບໍ່ແມ່ນການຕັດສິນໃຈຂອງລັດຖະບານ; ມັນຖືກນຳສະເໜີບາງບັນຫາກັບຂະບວນການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ທາງເລືອກທີ່ຈະມາແກ້ໄຂບັນຫາ ດັ່ງກ່າວ ລວມທັງການປະເມີນຢ່າງມີປະສິດທິພາບ (ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ) ໃນການດຳເນີນການ. |
| **ພາກທີ 1 ມາດຕະການລັດທີ່ມີຄວາມຈຳເປັນ** | |
| **1.1** ເວົ້າລາຍລະອຽດຂອງບັນຫາ<br><br>**1.2** ການອ້າງອີງຫຼັກຖານຂອງບັນຫາ<br><br>**1.3** ຄວາມຕ້ອງການມາດຕະການ ຫຼື ການແຊກແຊງຂອງລັດຖະບານ | ການດຳເນີນການຂຶ້ນທະບຽນວິສາຫະກິດຕ້ອງຈະແຈ້ງ, ງ່າຍດາຍ, ມີປະສິດທິຜົນ ແລະ ໂປ່ງໃສ ເພື່ອຮັບປະກັນ ໃຫ້ທຸລະກິດສາມາດດຳເນີນການຢ່າງວ່ອງໄວ, ເພີ່ມປະສິດທິພາບໃນການແຂ່ງຂັນຂອງທຸລະກິດ ສປປ ລາວ ແລະ ເປັນການຊຸກຍູ້ສົ່ງເສີມການລົງທຶນ ໃນ ສປປ ລາວ.<br>ໃນຂະບວນການຂຶ້ນແຈ້ງທະບຽນວິສາຫະກິດ ຍັງມີບາງບັນຫາທີ່ຫຍຸ້ງຍາກ ເຊິ່ງເຮັດໃຫ້ຫຼຸດປະສິດທິພາບຂອງບັນຍາກາດການດຳເນີນທຸລະກິດໃນ ສປປ ລາວ ຊຶ່ງມີບັນຫາດັ່ງລຸ່ມນີ້:<br>***1. ການເລີ່ມຕົ້ນດຳເນີນທຸລະກິດມີຄວາມຊັກຊ້າ ຍ້ອນສາເຫດຈາກຕາປະທັບຂອງວິສາຫະກິດ***<br>ໃນປັດຈຸບັນນີ້, ການສ້າງຕັ້ງທຸລະກິດໃດໜຶ່ງແມ່ນນັກລົງທຶນຕ້ອງມີຕາປະທັບ ຈາກກະຊວງປ້ອງກັນຄວາມສະຫງົບ ຫຼັງຈາກໄດ້ຮັບໃບທະບຽນວິສາຫະກິດ ແຕ່ວ່າກ່ອນການເລີ່ມດຳເນີນທຸລະກິດນັກລົງທຶນຍັງມີຄວາມສັບສົນກັບຂະບວນການນີ້ ລວມທັງຂະແໜງການໃດເປັນຜູ້ຮັບຜິດຊອບ ແລະ ໄລຍະເວລາໃນການອອກຕາປະທັບ ເຊັ່ນ ໃຊ້ເວລາໃນການຄວັດຕາປະທັບ 45 ວັນ ແລະ ມູນຄ່າ 120,000 ກີບ (ບົດລາຍງານຂອງ IFC, World Bank 2013) ຊຶ່ງເຮັດໃຫ້ການເລີ່ມຕົ້ນດຳເນີນທຸລະກິດ ມີຄວາມຊັກຊ້າ ແລະ ມີຄ່າໃຊ້ຈ່າຍສູງ.<br>ລັດຖະບານ ແມ່ນໄດ້ຊອກຫາວິທີການແກ້ໄຂກ່ຽວກັບບັນຫານີ້ ເພື່ອທີ່ຈະປັບປຸງການຂັ້ນຕອນການຂຶ້ນທະບຽນວິສາຫະກິດ ໂດຍການສ້າງໃຫ້ມີ ຄວາມໂປ່ງໃສ, ວ່ອງໄວ ແລະ ງ່າຍຂຶ້ນ ພ້ອມທັງລົດຄ່າໃຊ້ຈ່າຍຂອງນັກລົງທຶນ.<br>***2. ການອອກໃບທະບຽນວິສາຫະກິດ ໂດຍບໍ່ໄດ້ຮັບເລກປະຈຳຕົວຜູ້ເສຍອາກອນ***<br>ພາຍໃຕ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ປີ 2009, ໃບທະບຽນວິສາຫະກິດແມ່ນຕ້ອງປະກອບດ້ວຍໃບອະນຸຍາດການລົງທຶນ, ນະໂຍບາຍບາຍສົ່ງເສີມການລົງທຶນ, ໃບທະບຽນອາກອນ ແລະ ໃບອະນຸຍາດການດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງວ່າບາງກໍລະນີກໍຕ້ອງການມີໃບອະນຸຍາດດັ່ງກ່າວ ແຕ່ໃນບາງກໍລະນີກໍບໍ່ຕ້ອງການມີ ເຮັດໃຫ້ເພີ່ມຂັ້ນຕອນກຳນົດເວລາ ແລະ ຄ່າໃຊ້ຈ່າຍ ເຊັ່ນ ນັກທຸລະກິດຕ້ອງໄດ້ໄປເອົາເລກປະຈຳຕົວຜູ້ເສຍອາກອນ ນຳຂະແໜງສ່ວຍສາອາກອນ ກະຊວງການເງິນ ປະກອບສຳນວນເອກະສານໃໝ່, ມີຄ່າໃຊ້ຈ່າຍເພີ່ມຂຶ້ນ ແລະ ໃຊ້ໄລຍະເວລາເພີ່ມຂຶ້ນ 1-2 ອາທິດ.<br>ລັດຖະບານ ແມ່ນໄດ້ຊອກຫາວິທີການແກ້ໄຂກ່ຽວກັບບັນຫານີ້ ເພື່ອທີ່ຈະປັບປຸຂັ້ນຕອນການຂຶ້ນທະບຽນວິສາຫະກິດ ໂດຍການສ້າງໃຫ້ມີ ຄວາມໂປ່ງໃສ, ວ່ອງໄວ ແລະ ງ່າຍຂຶ້ນ ພ້ອມທັງລົດຄ່າໃຊ້ຈ່າຍຂອງນັກລົງທຶນ.<br>***3. ຜູ່ລົງທຶນ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງ ອຄ ຍັງຂາດຂໍ້ມູນທີ່ຄົບຖ້ວນກ່ຽວກັບນະໂຍບາຍການສ້າງຕັ້ງທຸລະກິດ ທີ່ຢູ່ໃນບັນຊີຄວບຄຸມ ທີ່ຕິດພັນກັບກະຊວງອື່ນ***<br>ນັກລົງທຶນຈຳນວນໜຶ່ງຍັງຂາດຂໍ້ມູນ ແລະ ຄວາມຊັດເຈນ ເຊັ່ນ ຂະແໜງການໃດເປັນຜູ້ຮັບຜິດຊອບ, ເອກະສານໃດທີ່ຕ້ອງການ, ໃຊ້ເວລາ ແລະ ຄ່າໃຊ້ຈ່າຍເທົ່າໃດ ຊຶ່ງກໍ່ໃຫ້ເກີດຄວາມສັບສົນ |

ຕໍ່ທັງນັກລົງທຶນ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ສິ່ງຜົນກໍ່ໃຫ້ເກີດຄວາມຊັກຊ້າຕໍ່ນັກລົງທຶນ ຕົວຢ່າງ: ໃນບາງກໍລະນີ ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ຂະແໜງການທີ່ກ່ຽວຂ້ອງ ຍັງຂາດການປະສານງານກັນ.

ເຈົ້າໜ້າທີ່ທະບຽນວິສາຫະກິດ ແມ່ນໄດ້ຊອກຫາວິທີການແກ້ໄຂກ່ຽວກັບບັນຫານີ້ ເພື່ອໃຫ້ມີຄວາມສະດວກ, ໂປ່ງໃສ, ງ່າຍດາຍ ຂຶ້ນ ແລະ ເພີ່ມປະສິດທິພາບຂອງຂະບວນການ ການຂຶ້ນທະບຽນວິສາຫະກິດ.

**4. ຍັງເກີດຄວາມສັບສົນ ກ່ຽວກັບບັນຫາວິສາຫະກິດໃດ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງອຸດສາຫະກຳ ແລະ ການຄ້າ**

ໃນກົດໝາຍສົ່ງເສີມການລົງທຶນ ມີພຽງແຕ່ນັກລົງທຶນ ໃນກິດຈະການທົ່ວໄປ ຕ້ອງໄດ້ມາຂຶ້ນທະບຽນນຳຂະແໜງການ ອຄ ສ່ວນນັກທຸລະກິດ ໃນກິດຈະການສຳປະທານແມ່ນຕ້ອງໄປພົວພັນກັບຂະແໜງການສົ່ງເສີມການລົງທຶນ ສ່ວນການລົງທຶນໃນເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແມ່ນຂຶ້ນທະບຽນນຳເຂດເສດຖະກິດດັ່ງກ່າວ. ສ່ວນທຸລະກິດຄ້າຂາຍຍ່ອຍ “ຜູ້ຄ້າຂາຍນ້ອຍ” ແມ່ນບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຊຶ່ງມັນບໍ່ໄດ້ບັນຍັດໃນກົດໝາຍເທື່ອ ສິ່ງຜົນໃຫ້ບັນດາທຸລະກິດຄ້າຂາຍຍ່ອຍນັ້ນ ຕ້ອງມາຂຶ້ນທະບຽນວິສາຫະກິດ ນຳຂະແໜງການ ອຄ ຫຼືບໍ່.

ລັດຖະບານ ແມ່ນໄດ້ຊອກຫາວິທີຈຳແນກວ່າທຸລະກິດໃດຄວນຈະມາຂຶ້ນທະບຽນນຳ ຂະແໜງ ອຄ ເພື່ອສ້າງຄວາມສະດວກ, ຊັດເຈນ ແລະ ສ້າງຄວາມເຂົ້າໃຈຕໍ່ຜູ້ຄ້າຂາຍນ້ອຍໃຫ້ຮູ້ວ່າ “ຜູ້ຄ້າຂາຍນ້ອຍ” ແມ່ນຖືກຍົກເວັ້ນ ບໍ່ຈຳເປັນຕ້ອງມາແຈ້ງຂຶ້ນທະບຽນວິສາຫະກິດເຮັດໃຫ້ບໍ່ຕ້ອງໄປເສຍເວລາ ແລະ ຍັງເປັນການສົ່ງເສີມ ໃຫ້ແກ່ການຂະຫຍາຍຕົວຂອງທຸລະກິດ ຂະໜາດນ້ອຍ.

**5. ວິສາຫະກິດທີ່ເລີ່ມດຳເນີນທຸລະກິດ ໂດຍຈຳເປັນຕ້ອງຜ່ານການກວດສອບມາດຕະຖານ/ ຄວາມຕ້ອງການຂອງພາກສ່ວນກ່ຽວຂ້ອງ**

ພາຍໃຕ້ກົດໝາຍ ວ່າດ້ວຍວິສາຫະກິດ ບາງວິສາຫະກິດ ສາມາດດຳເນີນທຸລະກິດ ຕາມທີ່ໄດ້ບົ່ງໄວ້ທາງຫຼັງໃບທະບຽນວິສາຫະກິດ ໂດຍບໍ່ຈຳເປັນຜ່ານການ ຂໍອານຸຍາດ ຫຼື ກວດສອບຜ່ານຂະແໜງການທີ່ກ່ຽວຂ້ອງອີກ ເວັ້ນເສຍແຕ່ບາງປະເພດທຸລະກິດທີ່ໄດ້ກຳນົດໄວ້ໃນບັນຊີຄວບຄຸມ. ຍ້ອນວ່າ ມີບາງຂະແໜງການໄດ້ແນະນຳໃຫ້ບາງທຸລະກິດບໍ່ຈຳເປັນຜ່ານການກວດສອບມາດຕະຖານ ແລະ ຄວາມຕ້ອງການຂອງພາກສ່ວນທີ່ກ່ຽວຂ້ອງ ກ່ອນການດຳເນີນທຸລະກິດ. ຕົວຢ່າງ: ບັນດາໂຮງງານກ່ອນດຳເນີນທຸລະກິດຈຳເປັນຕ້ອງໄດ້ຮັບອະນຸຍາດ ຈາກກົມອຸດສາຫະກຳເພື່ອເລີ່ມດຳເນີນທຸລະກິດ ໂດຍບໍ່ຈຳເປັນຕ້ອງໄດ້ຮັບການອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຊຶ່ງອາດຈະກໍ່ໃຫ້ເກີດຄວາມສ່ຽງ ແລະ ຜົນເສຍຕໍ່ ນັກລົງທຶນ, ກຳມະກອນ, ຜູ້ຊົມໃຊ້, ສັງຄົມ ແລະ ສິ່ງແວດລ້ອມ.

ລັດຖະບານຕ້ອງການຄວາມຮັບປະກັນວ່າ ທຸກການດຳເນີທຸລະກິດແມ່ນຢູ່ພາຍໃຕ້ ລະບຽບກົດໝາຍ ຂອງປະເທດ, ຫລຸດຄວາມສ່ຽງ, ຄວາມບໍ່ປອດໄພ ໃນຂະນະກໍ່ຍັງສ້າງຄວາມສະດວກ ແລະ ງ່າຍດາຍໃຫ້ແກ່ການສ້າງຕັ້ງທຸລະກິດ.

**6. ຍັງຂາດຂໍ້ມູນທີ່ຊັດເຈນ ໃນການປ່ຽນຮູບການ ຫຼື ຮູບແບບວິສາຫະກິດຈາກວິສາຫະກິດທີ່ຮັບຜິດຊອບຕໍ່ໜີ້ສິນບໍ່ຈຳກັດ ມາເປັນວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດ**

ພາຍໃຕ້ກົດໝາຍວ່າດ້ວຍວິສາຫະກິດ ປັດຈຸບັນແມ່ນບໍ່ໄດ້ມີຂໍ້ມູນກ່ຽວກັບວິສາຫະກິດທີ່ຮັບຜິດຊອບຕໍ່ໜີ້ສິນບໍ່ຈຳກັດ (ວິສາຫະກິດສ່ວນບຸກຄົນ ແລະ ວິສາຫະກິດຮຸ້ນສ່ວນສາມັນ) ສາມາດປ່ຽນເປັນວິສາຫະກິດທີ່ມີຄວາມຮັບຜິດຊອບໜີ້ສິນຈຳກັດ. ບັນດາ ທຸລະກິດ ແລະ ເຈົ້າໜ້າທີ່ ທະບຽນວິສາຫະກິດແມ່ນບໍ່ມີຄວາມຊັດເຈນ ໃນການປ່ຽນຮູບການ ຫຼື ຮູບແບບ ໄດ້ຫຼືບໍ່ ແລະ ເລື່ອງການຊຳລະສະສາງໜີ້ສິນ ຊຶ່ງສົ່ງຜົນກະທົບໃຫ້ແກ່ການຂະຫຍາຍຕົວຂອງ ບາງທຸລະກິດຂະໜາດນ້ອຍ ເມື່ອໃນກໍລະນີທຸລະກິດໃດໜຶ່ງບໍ່ໄດ້ຮັບອະນຸຍາດປ່ຽນຮູບການ ຫຼື ຮູບແບບວິສາຫະກິດ. ແຕ່ວ່າໃນກໍລະນີທີ່ສາມາດປ່ຽນຮູບການ ຫຼື ຮູບແບບໄດ້ ອາດຈະມີຊ່ອງວ່າງທາງດ້ານກົດໝາຍທີ່ສາມາດສົ່ງຜົນເສຍໃຫ້ແກ່ເຈົ້າໜີ້.

ມີຄວາມຈຳເປັນຕ້ອງມີຄວາມຊັດເຈນໃນການປ່ຽນວິສາຫະກິດທີ່ມີຄວາມຮັບຜິດຊອບຕໍ່ໜີ້ສິນບໍ່

<table>
<tr><td></td><td>ຈຳກັດ ມາເປັນວິສາຫະກິດທີ່ມີຄວາມຮັບຜິດຊອບຈຳກັດ ແລະ ເງື່ອນໄຂຂອງການຊຳລະໜີ້ສິນ, ເພື່ອຫຼີກລ່ຽງຄວາມສັບສົນ, ເພື່ອການຂະຫຍາຍຕົວຂອງທຸລະກິດ ແລະ ເພື່ອປົກປ້ອງເຈົ້າໜີ້ ແລະ ຜູ້ລົງທຶນ.</td></tr>
<tr><td colspan="2">ພາກທີ 2 ຈຸດປະສົງຂອງນະໂຍບາຍ</td></tr>
<tr><td>2.1 ຈຸດປະສົງຂອງມາດຕະການລັດຖະບານ</td><td>ຈຸດມຸ່ງໝາຍຂອງລັດຖະບານ ແມ່ນເພື່ອຮັບຮອງວ່າຂະບວນການ ການແຈ້ງຂຶ້ນທະບຽນວິສາຫະກິດ ແມ່ນຊັດເຈນ, ໂປ່ງໃສ, ໄວ ແລະ ມີປະສິດທິພາບ ເພື່ອຫຼຸດເວລາ ແລະ ຄ່າໃຊ້ຈ່າຍ ໃຫ້ທຸລະກິດ ແລະ ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນໃຫ້ແກ່ ລັດຖະບານ ແລະ ເພື່ອຊຸກຍູ້ການຂະຫຍາຍຕົວຂອງພາກສ່ວນ ເອກະຊົນ<br>ຈຸດເດັ່ນທີລັດຖະບານ ຊອກຫາວິທີການແກ້ໄຂ ມີດັ່ງນີ້:<br>• ປັບປຸງຂະບວນການ ການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ດີຂຶ້ນ;<br>• ເຮັດໃຫ້ ບາງພາກສ່ວນຂອງກົດໝາຍ ທີ່ມີຄວາມບໍ່ຈະແຈ້ງແກ່ນັກລົງທຶນ ແລະ ຂະແໜງການ ອຄ ໃຫ້ມີຄວາມຊັດເຈນຂຶ້ນ;<br>• ຮັບປະກັນຄວາມປັບປ່ຽນ ໃຫ້ແກ່ທຸລະກິດ ໃນການປ່ຽນຮູບການ ຫຼື ຮູບແບບ ວິສາຫະກິດ;<br>• ສະໜອງຂໍ້ມູນເພີ່ມເຕີມໃຫ້ແກ່ ນັກລົງທຶນ, ທຸລະກິດທີ່ໄດ້ຂຶ້ນທະບຽນແລ້ວ ແລະ ເຈົ້າໜ້າທີ່ຂະແໜງ ອຄ ກ່ຽວກັບຂໍ້ມູນການສ້າງຕັ້ງວິສາຫະກິດ ແລະ ການເລີ່ມຕົ້ນດຳເນີນທຸລະກິດ;<br>• ຊຸກຍູ້ການເຕີບໃຫຍ່ຂອງທຸລະກິດຂະໜາດນ້ອຍ.</td></tr>
<tr><td colspan="2">ພາກທີ 3 - ການວິເຄາະທາງເລືອກ</td></tr>
<tr><td>3.1 ອຳນາດການປົກຄອງຢູ່ປະເທດອື່ນ</td><td>ຂັ້ນຕອນການຂຶ້ນທະບຽນວິສາຫະກິດຂອງປະເທດຈີນ, ຍີ່ປຸ່ນ ແລະ ໄທ ໄດ້ຖືກນຳມາພິຈາລະນາ ແລະ ຖອກຖອນບົດຮຽນການພັດທະນາກ່ຽວກັບບັນດາທາງເລືອກ</td></tr>
<tr><td>3.2 ທາງເລືອກທີ່ບໍ່ແມ່ນເຄື່ອງມືນິຕິກຳ/ເຄິ່ງນິຕິກຳ</td><td>ການພິຈາລະນາທາງເລືອກເພື່ອແກ້ໄຂບັນຫາຕ່າງໆ ແລະ ໃຫ້ບັນລຸຜົນນະໂຍບາຍຕາມເປົ້າໝາຍດັ່ງນີ້:<br>1. ການເລີ່ມຕົ້ນດຳເນີນທຸລະກິດມີຄວາມຊັກຊ້າ ຍ້ອນສາເຫດຈາກຕາປະທັບຂອງວິສາຫະກິດ<br>1) ນຳໃຊ້ລະບົບປະຈຸບັນ;<br>2) ໃຫ້ຜູ້ລົງທຶນເປັນຄົນເລືອກວ່າຕ້ອງການຕາປະທັບ ຫຼື ບໍ ;<br>3) ບໍ່ໃຫ້ມີຕາປະທັບ;<br>4) ກຳນົດໄລຍະເວລາໃນການອອກຕາປະທັບໃຫ້ຈະແຈ້ງ (05 ວັນລັດຖະການ);<br>5) ບໍລິສັດສາມາດຄວັດຕາປະທັບດ້ວຍຕົນເອງ ແຕ່ຕ້ອງໄດ້ຮັບອະນຸຍາດຈາກະຊວງປ້ອງກັນສະຫງົບ ;<br>6) ບໍລິສັດສາມາດຄວັດຕາປະທັບດ້ວຍຕົນເອງ ແຕ່ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ.<br><br>2. ການອອກໃບທະບຽນວິສາຫະກິດ ທີ່ບໍ່ໄດ້ເລກປະຈຳຕົວຜູ້ເສຍອາກອນ<br>1) ນຳໃຊ້ລະບົບປະຈຸບັນ;<br>2) ແບບຟອມຄຳຮ້ອງຂໍເລກລະຫັດປະຈຳຕົວຜູ້ເສຍອາກອນ ໃຫ້ລວມຢູ່ນຳກັນ ກັບແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;<br>3) ໃຊ້ເລກທະບຽນວິສາຫະກິດ ແລະ ເລກລະຫັດປະຈຳຕົວຜູ້ເສຍອາກອນ ຮ່ວມໃຫ້ເປັນອັນດຽວກັນ;<br>4) ໃຫ້ຂະແໜງ ອຄ ສົ່ງໃບທະບຽນວິສາຫະກິດ ໄປໃຫ້ຂະແໜງເງິນ ໃສ່ເລກລະຫັດອາກອນ ໃນໃບທະບຽນວິສາຫະກິດ ແລະ ໃຫ້ນັກລົງທຶນໄປເອົານຳຂະແໜງການການເງິນ;</td></tr>
</table>

5) ໃຫ້ຂະແໜງການເງິນ ສົ່ງຈຳນວນເລກລະຫັດປະຈຳຕົວຜູ້ເສຍອາກອນເປັນຊຸດ ມາໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ;
6) ກະຊວງ ອຄ ສະເໜີໃຫ້ມີ ຕົວເລກລະຫັດປະຈຳຕົວຜູ້ເສຍອາກອນ ຈາກກະຊວງການເງິນ ໃນໃບສະເໜີອັນດຽວກັນ ແລະ ກະຊວງການເງິນ ສົ່ງຕົວເລກດັ່ງກ່າວພາຍໃນ 10 ວັນລັດຖະການ

**3. ຜູ້ລົງທຶນ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງ ອຄ ຍັງຂາດຂໍ້ມູນທີ່ຄົບຖ້ວນ ກ່ຽວກັບນະໂຍບາຍການສ້າງຕັ້ງທຸລະກິດ ທີ່ຢູ່ໃນບັນຊີຄວບຄຸມ ທີ່ຕິດພັນກັບກະຊວງອື່ນ**

1) ນຳໃຊ້ລະບົບປະຈຸບັນ;
2) ສົ່ງໃບສະເໜີໃຫ້ບັນດາກະຊວງ ເປັນແຕ່ລະປີ ເພື່ອຂໍນະໂຍບາຍຕ່າງໆ;
3) ຮຽກຮ້ອງໃຫ້ບັນດາກະຊວງສົ່ງລະບຽບການທີ່ຕິດພັນກັບປະເພດທຸລະກິດຄວບຄຸມຂອງຕົນ ມາຍັງ ກະຊວງອຸດສາຫະກຳ ແລະ ການຄ້າ;
4) ກະຊວງ ອຄ ຕ້ອງແຈ້ງການໂຄສະນາເຜີຍແຜ່ ສູ່ມວນຊົນ ແລະ ພະນັກງານລັດ ກ່ຽວກັບການສ້າງຕັ້ງປະເພດທຸລະກິດຕ່າງໆ.

**4. ຍັງເກີດຄວາມສັບສົນ ກ່ຽວກັບບັນຫາວິສາຫະກິດໃດ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງອຸດສາຫະກຳ ແລະ ການຄ້າ**

1. ນຳໃຊ້ລະບົບປະຈຸບັນ;
2. ຝຶກອົບຮົມ/ ໂຄສະນາເຜີຍແຜ່ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດໃນທົ່ວປະເທດ ໃຫ້ປະຕິບັດຢ່າງເປັນເອກະພາບ ແລະ ສ້າງຄວາມເຂົ້າໃຈໃຫ້ພາກເອກະຊົນ ກ່ຽວກັບປະເພດທຸລະກິດທີ່ຕ້ອງຂຶ້ນທະບຽນວິສາຫະກິດ;
3. ຂຽນນິຍາມກ່ຽວກັບ ຜູ້ຄ້າຂາຍນ້ອຍ ທີ່ກຳນົດໄວ້ໃນແຈ້ງການ ຂອງກະຊວງ ອຄ ໃສ່ບົດບັນຍັດຂອງ ກົດໝາຍວ່າດ້ວຍວິສາຫະກິດ;
4. ຂຽນນິຍາມ ຜູ້ຄ້າຂາຍນ້ອຍ ແມ່ນທຸລະກິດທີ່ມີລາຍໄດ້ບໍ່ເກີນ 12,000,000 ກີບ/ປີ ໄວ້ໃນບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍສ່ວຍສາອາກອນ;
5. ບັນຍັດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ປະເພດທຸລະກິດທົ່ວໄປແມ່ນມາແຈ້ງຂຶ້ນທະບຽນວິສາຫະກິດ ຢູ່ຂະແໜງ ອຄ. ການຂໍອະນຸຍາດລົງທຶນ ໃນກິດຈະການສຳປະທານ ແລະ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ;
6. ບັນຍັດໄວ້ໃນກົດໝາຍ ບາງປະເພດທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ໃຫ້ກຳນົດລາຍລະອຽດໄວ້ໃນລະບຽບການສະເພາະ.

**5. ວິສາຫະກິດສາມາດເລີ່ມດຳເນີນທຸລະກິດໂດຍບໍ່ຈຳເປັນຕ້ອງຜ່ານການກວດສອບມາດຕະຖານ/ ຄວາມຕ້ອງການ ຂອງພາກສ່ວນກ່ຽວຂ້ອງ**

1. ນຳໃຊ້ລະບົບປະຈຸບັນ;
2. ປັບປຸງກົດໝາຍວ່າດ້ວຍວິສາຫະກິດ ໃຫ້ຈະແຈ້ງວ່າ ປະເພດທຸລະກິດໃດ ຕ້ອງໄດ້ຮັບການອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ກ່ອນການດຳເນີນທຸລະກິດ;
3. ປັບປຸງກົດໝາຍວ່າດ້ວຍວິສາຫະກິດ ເພື່ອໃຫ້ທຸລະກິດໄປຂໍອະນຸຍາດ ກັບຂະແໜງການທີ່ກ່ຽວຂ້ອງ ກ່ອນການເຄື່ອນໄຫວທຸລະກິດ.

**6. ຍັງຂາດຂໍ້ມູນທີ່ຊັດເຈນ ໃນການປ່ຽນຮູບບການ ຫຼື ຮູບແບບວິສາຫະກິດຈາກວິສາຫະກິດທີ່ຮັບຜິດຊອບຕໍ່ໜີ້ສິນບໍ່ຈຳກັດ ມາເປັນວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດ**

| | |
|---|---|
| | 1. ນໍາໃຊ້ລະບົບປັດຈຸບັນ;<br>2. ບໍ່ສາມາດປ່ຽນໄດ້;<br>3. ປ່ຽນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ຂອງກົດໝາຍວ່າດ້ວຍວິສາຫະກິດ ເຊັ່ນ ການຊໍາລະໜີ້ສິນ ເປັນຕົ້ນ;<br>4. ປ່ຽນໄດ້ແຕ່ ຕ້ອງໄດ້ຮັບການເຫັນດີ ຈາກເຈົ້າໜີ້ກ່ອນ ເຊັ່ນ ຈາກທະນາຄານ, ຜູ້ໃຫ້ກູ້ຢືມ... |

## ພາກທີ4 ການປະເມີນຜົນກະທົບຂອງທາງເລືອກນະໂຍບາຍ

### 1. ການເລີ່ມຕົ້ນດໍາເນີນທຸລະກິດມີຄວາມຊັກຊ້າ ຍ້ອນສາເຫດຈາກຕາປະທັບຂອງວິສາຫະກິດ

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນໍາໃຊ້ລະບົບປັດຈຸບັນ | - ເຈົ້າໜ້າທີ່ມີຄວາມເຂົ້າໃຈ ແລະ ຊ່ຽວຊານ ກັບລະບົບເດີມ | - ວິສາຫະກິດຕ່າງໆ ຍັງຖືກຮຽກຮ້ອງໃຫ້ມີຕາປະທັບ ຊຶ່ງໄດ້ຮັບຈາກກະຊວງປ້ອງກັນຄວາມສະຫງົບ ແລະ ການດໍາເນີນການແມ່ນມີລາຄາ 120,000 ກີບ ແລະ ໃຊ້ເວລາ 45 ວັນ.<br>- ການດໍາເນີນການ ແມ່ນຍັງມີຫຼາຍຂັ້ນຕອນ ແລະ ໃຊ້ເວລາຫຼາຍທຽບໃສ່ປະເທດອື່ນ ເຮັດໃຫ້ ສປປ ລາວ ອາດເສຍປຽບໃນດ້ານຄວາມສາມາດໃນການແຂ່ງຂັນທາງດ້ານເສດຖະກິດ |
| 2. ໃຫ້ຜູ້ລົງທຶນເປັນຄົນເລືອກວ່າຕ້ອງການຕາປະທັບ | - ບາງຫົວໜ່ວຍວິສາຫົດທີ່ມາຈາກຕ່າງປະເທດ ແມ່ນມີຕາປະທັບຢູ່ແລ້ວ<br>- ບາງວິສາຫະກິດບໍ່ຕ້ອງການ/ຈໍາເປັນມີຕາປະທັບ<br>- ການແຈ້ງຂຶ້ນທະບຽນວິສາຫະກິດຈະໄວຂຶ້ນ ຖ້າບໍ່ຈໍາເປັນມີຕາປະທັບ | - ອາດຈະເຮັດໃຫ້ລາຍຮັບ ຂອງກະຊວງປ້ອງກັນຄວາມສະຫງົບຫຼຸດລົງ |
| 3.ບໍ່ໃຫ້ມີຕາປະທັບ | - ຫຼຸດເວລາ ແລະ ຄ່າໃຊ້ຈ່າຍໃນການເລີ່ມຕົ້ນດໍາເນີນທຸລະກິດ<br>- ລົດຄ່າໃຊ້ຈ່າຍ, ເວລາ ແລະ ຄ່າໃຊ້ຈ່າຍທີ່ຈໍາເປັນ ໃນການຄວັດຕາປະທັບ | - ບໍລິສັດທີ່ຕ້ອງການນໍາໃຊ້ຕາປະທັບແມ່ນບໍ່ສາມາດມີໄດ້ |
| 4. ກໍານົດໄລຍະເວລາໃນການອອກຕາປະທັບໃຫ້ຈະແຈ້ງ (05 ວັນລັດຖະການ) | - ເຮັດໃຫ້ຂັ້ນຕອນການຂຶ້ນທະບຽນວິສາຫະກິດສະດວກຂຶ້ນ ແລະ ວ່ອງໄວຂຶ້ນສໍາລັບຫົວໜ່ວຍທຸລະກິດ<br>- ເພີ່ມຄວາມເຂົ້າໃຈໃຫ້ແກ່ວິສາຫະກິດ ແລະ ລັດຖະບານ ກ່ຽວກັບການກໍານົດໄລຍະເວລາ | - ກະຊວງປ້ອງກັນຄວາມສະຫງົບ ອາດຈະບໍ່ສາມາດດໍາເນີນການໄດ້ຕາມກໍານົດເວລາ |
| 5. ບໍລິສັດສາມາດຄວັດຕາປະທັບດ້ວຍຕົນເອງ ແຕ່ຕ້ອງໄດ້ຮັບອະນຸຍາດຈາກະຊວງປ້ອງກັນສະຫງົບ | - ສາມາດຫຼຸດຂັ້ນຕອນ ແລະ ເວລາ ໃຫ້ແກ່ນັກລົງທຶນ ແລະ ເຈົ້າໜ້າທີ່ ໃນຂັ້ນຕອນການຂຶ້ນທະບຽທະບຽນ<br>- ທຸລະກິດ ສາມາດສ້າງຕາປະທັບດ້ວຍ | - ຫຼຸດລາຍຮັບ ຂອງກະຊວງປ້ອງກັນຄວາມສະຫງົບລົງ |

| | | |
|---|---|---|
| | ຕົນເອງ ດ້ວຍລາຄາທີ່ຖືກກວ່າ | |
| 6. ບໍລິສັດສາມາດຄວັດຕາປະທັບດ້ວຍຕົນເອງ ແຕ່ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ | - ສາມາດຫຼຸດຜ່ອນຂັ້ນຕອນ ແລະ ເວລາ ຂອງຜູ້ລົງທຶນ ແລະ ເຈົ້າໜ້າທີ່ ໃນຂັ້ນຕອນການຂຶ້ນທະບຽນ<br>- ມີພຽງແຕ່ກະຊວງດຽວທີ່ຮັບຜິດຊອບໃນຂັ້ນຕອນການຂຶ້ນທະບຽນ | - ອາດຈະມີຄວາມຕ້ອງການພະນັກງານ/ພະແນກໃໝ່ເພີ່ມຂຶ້ນ ໃນກະຊວງອຸດສາຫະກຳ ແລະ ການຄ້າ |

## 2. ການອອກໃບທະບຽນວິສາຫະກິດທີ່ບໍ່ໄດ້ຮັບເລກປະຈຳຕົວຜູ້ເສຍອາກອນພ້ອມ

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນຳໃຊ້ລະບົບປັດຈຸບັນ | | - ໃຊ້ເວລາດົນ ແລະ ຫຼາຍຂັ້ນຕອນ, ຫຼາຍແບບຟອມ<br>- ຜູ້ລົງທຶນໄດ້ໄປພົວພັນກັບຫຼາຍຂະແໜງການ |
| 2. ແບບຟອມຄຳຮ້ອງຂໍເລກລະຫັດປະຈຳຕົວຜູ້ເສຍອາກອນ ໃຫ້ລວມຢູ່ນຳກັນ ກັບແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ | - ຫຼຸດຂັ້ນຕອນໃຫ້ແກ່ຜູ້ລົງທຶນ<br>- ນັກລົງທຶນປະກອບຟອມດຽວ ຊຶ່ງຈະເຮັດໃຫ້ຫຼຸດເວລາ ຂອງການໄດ້ຮັບ ແລະ ການປະກອບຄຳຮ້ອງແມ່ນງ່າຍຂຶ້ນ | - ຈຳເປັນຕ້ອງໄດ້ຝຶກອົບຮົມ ແລະ ແຈ້ງການໃຫ້ແກ່ເຈົ້າໜ້າທີ່ຂະແໜງ ອຄ ກ່ຽວກັບ ແບບຟອມໃໝ່<br>- ຂະແໜງ ອຄ ແມ່ນຕ້ອງໄດ້ສົ່ງແບບຟອມໃຫ້ຂະແໜງການເງິນ ເພື່ອອະນຸຍາດ ເລກລະຫັດປະຈຳຕົວຜູ້ເສຍອາກອນ ຊຶ່ງຈະເຮັດໃຫ້ມີຄ່າໃຊ້ຈ່າຍເພີ່ມຂຶ້ນ |
| 3. ໃຊ້ເລກທະບຽນວິສາຫະກິດ ແລະ ເລກລະຫັດປະຈຳຕົວຜູ້ເສຍອາກອນ ຮ່ວມໃຫ້ເປັນອັນດຽວກັນ | - ເຮັດໃຫ້ຂັ້ນຕອນການຂຶ້ນທະບຽນວິສາຫະກິດ ແລະ ການຂໍເລກປະຈຳຕົວຜູ້ເສຍອາກອນ ແມ່ນວ່ອງໄວຂຶ້ນ, ສະດວກຂຶ້ນ ແລະ ບໍ່ຫຍຸ້ງຍາກ<br>- ມັນຈະເປັນລະບົບດຽວກັນລະຫວ່າງ ຂະແໜງ ການເງິນ ແລະ ຂະແໜງ ອຄ | - ເລກລະຫັດໃບທະບຽນວິສາຫະກິດ ມີ 10 ຕົວເລກ ແຕ່ ເລກລະຫັດປະຈຳຕົວຜູ້ເສຍອາກອນ ມີ 12 ຕົວເລກ ຊຶ່ງຕ້ອງໄດ້ປັບປຸງລະບົບທັງສອງ |
| 4. ໃຫ້ຂະແໜງ ອຄ ສົ່ງໃບທະບຽນວິສາຫະກິດ ໄປໃຫ້ຂະແໜງເງິນໃສ່ເລກລະຫັດອາກອນ ໃນໃບທະບຽນວິສາຫະກິດ ແລະ ໃຫ້ນັກລົງທຶນໄປເອົາ ທະບຽນດັ່ງກ່າວ ນຳຂະແໜງການເງິນເລີຍ | - ສາມາດຫຼຸດເວລາ ແລະ ຈຳນວນຂັ້ນຕອນທີ່ກ່ຽວຂ້ອງລົງ | - ຫົວໜ່ວຍທຸລະກິດຕ້ອງໄດ້ໄປຫຼາຍບ່ອນ<br>- ຂະແໜງ ອຄ ຕ້ອງໄດ້ນຳໃຊ້ງົບປະມານ ໃນການສົ່ງໃບທະບຽນວິສາຫະກິດ ໄປໃຫ້ຂະແໜງການເງິນ |
| 5. ໃຫ້ຂະແໜງການເງິນ ສົ່ງຈຳນວນເລກລະຫັດປະຈຳຕົວຜູ້ເສຍອາກອນເປັນຊຸດ(ງວດ) ມາໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອເອົາເລກລະຫັດດັ່ງກ່າວເຂົ້າໃນໃບທະບຽນວິສາຫະກິດ | - ຂັ້ນຕອນນີ້ແມ່ນໄວຂຶ້ນ ໃຫ້ແກ່ຜູ້ລົງທຶນ ແລະ ພາກສ່ວນຂອງລັດ ຊຶ່ງຈະຫຼຸດຄ່າໃຊ້ຈ່າຍໃຫ້ແກ່ນັກລົງທຶນ<br>- ນັກລົງທຶນສາມາດໄປພົວພັນຢູ່ຈຸດດຽວ | - ພະລະບົດບາດ ກ່ຽວກັບການຂຶ້ນທະບຽນອາກອນ ຂອງກົມສ່ວຍສາອາກອນ ກະຊວງການເງິນແມ່ນຫຼຸດລົງ ຊຶ່ງມີຄວາມເປັນໄປໄດ້ວ່າບາງຫົວໜ່ວຍວິສາຫະກິດແມ່ນຈະບໍ່ໄດ້ຂຶ້ນທະບຽນອາກອນ |
| 6. ກະຊວງ ອຄ ສະເໜີໃຫ້ມີ ຕົວເລກລະຫັດປະຈຳຕົວຜູ້ເສຍອາ | -ທາງເລືອກນີ້ສາມາດເຮັດໃຫ້ຂັ້ນຕອນການຂຶ້ນທະບຽນວິສາຫະກິດໄວຂຶ້ນ | - ຂະແໜງ ອຄ ຕ້ອງໄດ້ນຳໃຊ້ງົບປະມານ ໃນການສົ່ງແບບຟອມເອກະສານ ໄປໃຫ້ຂະແໜງ |

| | | |
|---|---|---|
| ກອນ ຈາກກະຊວງການເງິນໃນ ໃບສະເໜີອັນດຽວກັນ ແລະ ກະຊວງການເງິນ ສົ່ງຕົວເລກ ດັ່ງກ່າວພາຍໃນ 10 ວັນລັດຖະ ການ | ແລະ ງ່າຍຂຶ້ນ ແກ່ຜູ້ລົງທຶນ, ຫຼຸດຄ່າ ໃຊ້ຈ່າຍໃນການຂຶ້ນທະບຽນ<br>-ຜູ້ລົງທຶນສາມາດໄປພົວພັນຢູ່ບ່ອນ ດຽວ<br>- ເຮັດໃຫ້ກຳນົດເວລາການຂຶ້ນທະບຽນ ມີຄວາມແນ່ນອນຂຶ້ນ | ການເງິນ |

3. ຜູ້ລົງທຶນ ແລະ ເຈົ້າໜ້າທີ່ຂະແໜງ ອຄ ຍັງຂາດຂໍ້ມູນທີ່ຄົບຖ້ວນ ກ່ຽວກັບການສ້າງຕັ້ງທຸລະກິດ ໃນບັນຊີຄວບຄຸມຂອງກະຊວງ ອື່ນ

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນຳໃຊ້ລະບົບປັດຈຸບັນ | | - ນັກລົງທຶນຈະຍັງຄົງມີຄວາມບໍ່ແນ່ນອນ ກ່ຽວກັບຄວາມຕ້ອງສຳລັບເອກະສານຄຳຮ້ອງຂອງບາງປະເພດທຸລະກິດສະເພາະ<br>- ນັກລົງທຶນແມ່ນໄດ້ຮັບຂໍ້ມູນທີ່ຍັງບໍ່ທັນ ເປັນເອກະພາບກັນຈາກເຈົ້າໜ້າທີ ອຄ<br>- ຍັງສືບຕໍ່ມີບັນຫາຈຳນວນເອກະສານທີ່ ບໍ່ຖືກຕ້ອງ, ສົ່ງຜົນໃຫ້ເກີດຄວາມຊັກຊ້າ ຕໍ່ນັກລົງທຶນ ແລະ ການໃຊ້ຊັບພະຍາ ກອນຂອງລັດຖະບານ ໂດຍບໍ່ຈຳເປັນ |
| 2. ສົ່ງໃບສະເໜີໃຫ້ບັນດາກະຊວງ ເປັນແຕ່ລະປີ ເພື່ອຄົ້ນຄວ້າຂໍ້ມູນ ກ່ຽວກັບນະໂຍບາຍຕ່າງໆ ຂອງແຕ່ ລະກະຊວງ | - ຂະແໜງ ອຄ ຈະໄດ້ຮັບຂໍ້ມູນທີ່ພຽງພໍ ຊຶ່ງສາມາດສະໜອງຂໍ້ມູນໃຫ້ນັກລົງທຶນໄດ້ດີຂຶ້ນ, ຫຼຸດບັນຫາຂໍ້ມູນທີ່ບໍ່ເປັນເອກະພາບກັນ ແລະ ບັນຫາຄວາມຊັກຊ້າລົງ | - ສະແດງໃຫ້ເຫັນໃນໄລຍະຜ່ານມາ ແມ່ນກະຊວງທີ່ມີສ່ວນກ່ຽວພັນບໍ່ໄດ້ສາມາດສະໜອງຂໍ້ມູນເທົ່າທີ່ຄວນ |
| 3. ຮຽກຮ້ອງໃຫ້ບັນດາກະຊວງ ສົ່ງລະບຽບການທີ່ຕິດພັນກັບປະ ເພດທຸລະກິດຄວບຄຸມຂອງຕົນ ມາຍັງ ກະຊວງອຸດສາຫະກຳ ແລະ ການຄ້າ | - ຂະແໜງ ອຄ ຈະໄດ້ຮັບຂໍ້ມູນທີ່ພຽງພໍ ຊຶ່ງສາມາດສະໜອງຂໍ້ມູນໃຫ້ນັກລົງທຶນໄດ້ດີຂຶ້ນ, ຫຼຸດບັນຫາຂໍ້ມູນທີ່ບໍ່ເປັນເອກະພາບກັນ ແລະ ບັນຫາຄວາມຊັກຊ້າຫຼຸດລົງ<br>- ການຮຽກຮ້ອງດັ່ງກ່າວເຂົ້າໃນກົດໝາຍສາ ມາດເຮັດໃຫ້ບັນດາກະຊວງຕ່າງໆ ສະໜອງ ຂໍ້ມູນໃຫ້ແກ່ຂະແໜງ ອຄ | |
| 4. ກະຊວງ ອຄ ຕ້ອງໂຄສະນາ ເຜີຍແຜ່ຂໍ້ມູນ ກ່ຽວກັບການສ້າງຕັ້ງ ທຸລະກິດແຕ່ລະຮູບແບບ | - ເຮັດໃຫ້ຜູ້ລົງທຶນມີຄວາມເຂົ້າໃຈງ່າຍດາຍ ກ່ຽວກັບຂັ້ນຕອນການສ້າງຕັ້ງວິສາຫະກິດ, ສົ່ງຜົນໃຫ້ບັນດາເອກະສານທີ່ບໍ່ຖືກຕ້ອງໜ້ອຍ ລົງ ແລະ ຫຼຸດບັນຫາການຊັກຊ້າໃນການແຈ້ງ ຂຶ້ນທະບຽນ<br>- ເຈົ້າໜ້າທີ່ຂະແໜງ ອຄ ແມ່ນໄດ້ຮັບແຈ້ງ ການຢ່າງທົ່ວເຖິງຂຶ້ນ ຊຶ່ງສາມາດສະໜອງຂໍ້ມູນ ໃຫ້ແກ່ຜູ້ລົງທຶນໄດ້ຢ່າງຈະແຈ້ງຂຶ້ນ<br>- ເຮັດໃຫ້ຂັ້ນຕອນການຂຶ້ນທະບຽນວິສາຫະ ກິດ ສະດວກ ວ່ອງໄວຂຶ້ນ ແລະ ໂປ່ງໃສ | - ກົມທະບຽນຈຳເປັນຕ້ອງໄດ້ໃຊ້ງົບປະ ມານໃນການເຜີຍແຜ່ |

**4. ຍັງເກີດຄວາມສັບສົນ ກ່ຽວກັບບັນຫາວິສາຫະກິດໃດ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງອຸດສາຫະກຳ ແລະ ການຄ້າ**

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນຳໃຊ້ລະບົບປະຈຸບັນ | | - ຜູ້ລົງທຶນ ແລະເຈົ້າໜ້າທີ່ຂອງລັດຈຳນວນໜຶ່ງ ຍັງບໍ່ທັນເຂົ້າໃຈຈະແຈ້ງວ່າທຸລະກິດປະເພດໃດແມ່ນແຈ້ງຂຶ້ນທະບຽນຢູ່ຂັ້ນກະຊວງ<br>- ນັກທຸລະກິດຈຳນວນໜຶ່ງຍັງມາຍື່ນຄຳຮ້ອງແຈ້ງຂຶ້ນທະບຽນທີ່ກະຊວງ ອຄ ເມື່ອມັນບໍ່ຈຳເປັນ ດັ່ງນັ້ນຈະຕ້ອງໄດ້ໄປຍື່ນຄືນໃໝ່ຜ່ານກະຊວງ ຜທ ຫຼື ເຂດເສດຖະກິດພິເສດ ແລະ ເຂດ ເສດຖະກິດສະເພາະ<br>- ວິສາຫະກິດຂະໜາດນ້ອຍຈຳນວນໜຶ່ງມາຂຶ້ນທະບຽນວິສາຫະກິດ ທັງທີ່ຍັງບໍ່ມີຄວາມຮຽກຮ້ອງຕ້ອງການ (ຄວາມຈຳເປັນ) |
| 2. ຝຶກອົບຮົມ/ ໂຄສະນາເຜີຍແຜ່ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດໃນທົ່ວປະເທດ ໃຫ້ປະຕິບັດຢ່າງເປັນເອກະພາບ ແລະ ສ້າງຄວາມເຂົ້າໃຈໃຫ້ພາກເອກະຊົນ ກ່ຽວກັບປະເພດທຸລະກິດ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ | - ມີຄວາມເຂົ້າໃຈຢ່າງຈະແຈ້ຂຶ້ນ ແລະ ເອກະສານແມ່ນມີຄວາມເປັນເອກະພາບຂຶ້ນ ຊຶ່ງສອດຄ່ອງກັບກົດໝາຍ<br>- ຫຼຸດບັນຫາທີ່ບໍ່ຖືກຕ້ອງ/ເອກະສານຄຳຮ້ອງທີ່ບໍ່ຈຳເປັນໃນການຂຶ້ນທະບຽນວິສາຫະກິດແກ່ຜູ້ລົງທຶນ | - ຕ້ອງໃຊ້ເວລາ ແລະ ງົບປະມານ ເຂົ້າໃນການໂຄສະນາເຜີຍແຜ່ ໃຫ້ແກ່ນັກລົງທຶນ ແລະ ເຈົ້າໜ້າທີ່ |
| 3.ຂຽນນິຍາມກ່ຽວກັບ ຜູ້ຄ້າຂາຍນ້ອຍ ທີ່ກຳນົດໄວ້ໃນ ແຈ້ງການ ຂອງກະຊວງ ອຄ ໃສ່ບົດບັນຍັດຂອງ ກົດໝາຍວ່າດ້ວຍວິສາຫະກິດ | - ມີຄວາມເຂົ້າໃຈຢ່າງຈະແຈ້ງຂຶ້ນ ສຳລັບເຈົ້າໜ້າທີ່ ອຄ ແລະ ທຸລະກິດຂະໜາດໜ້ອຍ<br>- ຫຼຸດເວລາ ແລະ ຄ່າໃຊ້ຈ່າຍລົງ | - ນິຍາມຂອງທຸລະກິດໃດໜຶ່ງ ອາດຍັງບໍ່ທັນຍຸຕິທຳສຳລັບທຸລະກິດຂະໜາດນ້ອຍອື່ນໆ ທີ່ບໍ່ໄດ້ຍົກເວັ້ນພາສີ |
| 4.ຂຽນນິຍາມ ຜູ້ຄ້າຂາຍນ້ອຍ ແມ່ນທຸລະກິດທີ່ມີລາຍໄດ້ບໍ່ເກີນ 12,000,000 ກີບ/ປີ ໄວ້ໃນບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າ ດ້ວຍສ່ວຍສາອາກອນ | - ມີຄວາມເຂົ້າໃຈຢ່າງຈະແຈ້ງຂຶ້ນ ສຳລັບເຈົ້າໜ້າທີ່ ອຄ ແລະ ທຸລະກິດຂະໜາດໜ້ອຍ<br>- ຫຼຸດເວລາ ແລະ ຄ່າໃຊ້ຈ່າຍລົງ<br>- ເຮັດໃຫ້ຜູ້ລົງທຶນເຂົ້າໃຈວ່າ ຖ້າມີໃບທະບຽນວິສາຫະກິດ ຕ້ອງໄດ້ເສຍອາກອນ ແລະ ຖ້າທຸລະກິດໃດທີ່ຕ້ອງໄດ້ເສຍອາກອນ ຕ້ອງມາຂຶ້ນທະບຽນວິສາຫະກິດ ເໝືອນກັນ | - ຕ້ອງແຈ້ງການໃຫ້ເຈົ້າໜ້າ ອຄ ຊາບຢ່າງທົ່ວເຖິງ<br>- ເປັນການຍາກທີ່ຈະສາມາດຈຳແນກໄດ້ວ່າທຸລະກິດໃດໜຶ່ງມີລາຍຮັບເກີນກວ່າ 12 ລ້ານກີບ/ປີ |

| | | |
|---|---|---|
| 5.ບັນຍັດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ປະເພດທຸລະກິດທົ່ວໄປແມ່ນມາແຈ້ງຂື້ນທະບຽນວິສາຫະກິດ ຢູ່ຂະແໜງ ອຄ. ການຂໍອະນຸຍາດລົງທຶນ ໃນກິດຈະການສໍາປະທານ ແລະ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ | - ເຮັດໃຫ້ເຈົ້າໜ້າທີ່, ຜູ້ລົງທຶນ ແລະ ທຸກຂະແໜງການທີ່ກ່ຽວຂ້ອງທີຮັບຜິດຊອບກັບທຸລະກິດໃດໜຶ່ງ ມີຄວາມເຂົ້າໃຈຢ່າງຈະແຈ້ງ ແລະ ເປັນເອກະພາບ<br>- ຫຼຸດເວລາ ແລະ ຄ່າໃຊ້ຈ່າຍລົງ<br>- ຈະເຮັດ ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ມີຄວາມສອດຄ່ອງກັນ | |
| 6.ບັນຍັດໄວ້ໃນກົດໝາຍ ບາງປະເພດທຸລະກິດທີ່ບໍ່ຈໍາເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ໃຫ້ກໍານົດລາຍລະອຽດໄວ້ໃນລະບຽບການສະເພາະ | - ສ້າງຄວາມປັບປ່ຽນ (ຍືດຍຸ່ນ) ສໍາລັບການໃຫ້ຂໍ້ມູນ ກ່ຽວກັບວິສາຫະກິດໃດບໍ່ຈໍາເປັນຕ້ອງມາຂຶ້ນທະບຽນຢູ່ຂະແໜງ ອຄ | - ໃນກົດໝາຍ ບໍ່ໄດ້ລະບຸຢ່າງຊັດເຈນ ກ່ຽວກັບທຸລະກິດທີ່ກໍານົດໄວ້ໃນລະບຽບການສະເພາະ |

**5. ວິສາຫະກິດທີ່ເລີ່ມດໍາເນີນທຸລະກິດ ໂດຍຈໍາເປັນຕ້ອງຜ່ານການກວດສອບມາດຕະຖານ/ ຄວາມຕ້ອງການຂອງພາກສ່ວນກ່ຽວຂ້ອງ**

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນໍາໃຊ້ລະບົບປະຈຸບັນ | - ບໍ່ໄດ້ມີການຮຽກຮ້ອງຂໍ້ກໍານົດເພີ່ມເຕີມຕໍ່ບັນດາວິສາຫະກິດ | - ບາງທຸລະກິດຍັງຄົງດໍາເນີນງານໄດ້ ໂດຍປາສະຈາກການກວດຜ່ານມາດຕະຖານ/ ຄວາມຕ້ອງຂອງຂະແໜງການກ່ຽວຂ້ອງ - ອາດຈະເກີດຄວາມສ່ຽງຕໍ່ກັບຜູ້ລົງທຶນ, ຜູ້ອອກແຮງງານ, ຜູ້ບໍລິໂພກ, ຊຸມຊົນ ແລະ ສິ່ງແວດລ້ອມ |
| 2. ປັບປຸງກົດໝາຍວ່າດ້ວຍວິສາຫະກິດ ໃຫ້ຈະແຈ້ງວ່າປະເພດທຸລະກິດໃດ ຕ້ອງໄດ້ຮັບການອະນຸຍາດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ກ່ອນການດໍາເນີນທຸລະກິດ | - ຫຼຸດຄວາມສ່ຽງຂອງການປະຕິບັດທີ່ບໍ່ປອດໄພ ຕ່າງໆ ຈາກມາດຕະຖານ/ ຄວາມຕ້ອງການທີ່ບໍ່ໄດ້ຜ່ານການກວດສອບ | - ເຮັດໃຫ້ການເລີ່ມດໍາເນີນທຸລະກິດຊັກຊ້າ<br>- ເພີ່ມຄ່າໃຊ້ຈ່າຍໃນການປະຕິບັດຕາມ (ເພີ່ມເວລາ, ຂັ້ນຕອນ ແລະ ຄ່າໃຊ້ຈ່າຍ ຂື້ນ) ຈາກການທີ່ຕ້ອງໄດ້ຮັບອະນຸຍາດຫຼາຍເທື່ອ |
| 3. ປັບປຸງກົດໝາຍວ່າດ້ວຍວິສາຫະກິດ ເພື່ອຮຽກຮ້ອງໃຫ້ທຸລະກິດໄປຂໍອະນຸຍາດ ກັບຂະແໜງການທີ່ກ່ຽວຂ້ອງ ກ່ອນການເຄື່ອນໄຫວທຸລະກິດ | - ບໍ່ມີຄໍາຮ້ອງເພີ່ມເຕີມໃຫ້ແກ່ບັນດາວິສາຫະກິດ<br>- ສ້າງຄວາມຊັດເຈນໃຫ້ຜູ້ລົງທຶນ ວ່າຍັງຮຽກຮ້ອງໃຫ້ໄປຜ່ານຂະແໜງການທີ່ກ່ຽວຂ້ອງ - ຊຶ່ງຫຼຸດຄວາມສ່ຽງຂອງການປະຕິບັດທີ່ບໍ່ປອດໄພ ຕ່າງໆ ຈາກມາດຕະຖານ/ ຄວາມຕ້ອງການທີ່ບໍ່ໄດ້ຜ່ານການກວດສອບ | |

**6. ຍັງຂາດຂໍ້ມູນທີ່ຊັດເຈນ ໃນການປ່ຽນຮູບການ ຫຼື ຮູບແບບວິສາຫະກິດຈາກວິສາຫະກິດທີ່ຮັບຜິດຊອບຕໍ່ໜີ້ສິນບໍ່ຈຳກັດ ມາເປັນວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດ**

| ທາງເລືອກ | ດ້ານບວກ | ດ້ານລົບ |
|---|---|---|
| 1. ນຳໃຊ້ລະບົບປັດຈຸບັນ | | -ບາງວິສາຫະກິດ ແລະເຈົ້າໜ້າທີ່ ຍັງຄົງຈະບໍ່ ຊັດເຈນ ກ່ຽວກັບບັນຫາການປ່ຽນວິສາຫະກິດ ທີ່ຮັບຜິດຊອບໜີ້ສິນບໍ່ຈຳກັດ ມາເປັນ ວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດໄດ້ ຫຼືບໍ່ ແລະ ເງື່ອນໄຂໃນການປ່ຽນເປັນແນວໃດ<br>- ຊຶ່ງກໍ່ໃຫ້ເກີດຄວາມຊັກຊ້າ ໃນບັນຫາຄວາມ ຊັດເຈນດັ່ງກ່າວ<br>-ບາງວິສາຫະກິດອາດຈະບໍ່ໄດ້ຮັບອະນຸຍາດໃຫ້ ປ່ຽນ, ຊຶ່ງເປັນການຈຳກັດການເຕີບໂຕ (ຂະຫຍາຍຕົວ)<br>-ບາງເຈົ້າໜີ້ອາດເສຍຜົນປະໂຫຍດຍ້ອນວ່າອາດ ຈະມີຊ່ອງວ່າງໃຫ້ວິສາຫະກິດ ສາມາດຫຼີກລ້ຽງ ຄວາມຮັບຜິດຊອບຕໍ່ໜີ້ສິນທີ່ຕົນສ້າງຂຶ້ນ |
| 2. ບໍ່ສາມາດປ່ຽນໄດ້ | -ທາງເລືອກນີ້ອາດຈະເຮັດໃຫ້ເກີດ ຄວາມຈະແຈ້ງໃຫ້ແກ່ບັນດາວິສາຫະ ກິດ ແລະ ເຈົ້າໜ້າທີ່ໃນການຈັດຕັ້ງປະ ຕິບັດ<br>-ຫຼຸດເວລາລົງໃນການຊອກຫາຂໍ້ມູນ ຄວາມຊັດເຈນ<br>-ທາງເລືອກນີ້ເປັນຜົນດີໃຫ້ແກ່ ເຈົ້າໜີ້ ເລື່ອງຄວາມຮັບຜິດຊອບໜີ້ສິນ ໃນການຊຳລະສະສາງ | - ເປັນການບໍ່ອະນຸຍາດໃຫ້ບັນດາວິສາຫະກິດປ່ຽນເປັນວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດ ຊຶ່ງສ້າງຄວາມຫຍຸ້ງຍາກ ແລະ ເປັນການຈຳກັດ ການຂະຫຍາຍຕົວຂອງວິສາຫະກິດ<br>- ວິສາຫະກິດຈະຖືກບັງຄັບໃຫ້ປິດກິດຈະການ ແລະ ສ້າງຕັ້ງວິສາຫະກິດໃໝ່ ຊຶ່ງຈະເປັນການ ໃຊ້ເວລາດົນ, ໃຊ້ຄ່າໃຊ້ຈ່າຍ ແລະ ຊື່ເດີມຂອງ ວິສາຫະກິດ ແມ່ນບໍ່ສາມາດນຳໃຊ້ໄດ້ໃນໄລຍະ ສາມ ປີ |
| 3. ປ່ຽນໄດ້ ແຕ່ຕ້ອງປະຕິບັດຕາມ ຂັ້ນຕອນ ຂອງກົດໝາຍວ່າດ້ວຍ ວິສາຫະກິດ ເຊັ່ນ ການຊຳລະ ໜີ້ສິນ ເປັນຕົ້ນ | -ທາງເລືອກນີ້ອາດຈະເຮັດໃຫ້ເກີດຄວາມຈະແຈ້ງໃຫ້ແກ່ບັນດາວິສາຫະກິດ ແລະ ເຈົ້າໜ້າທີ່ໃນການຈັດຕັ້ງປະຕິບັດ<br>- ຫຼຸດເວລາລົງໃນການຊອກຫາຂໍ້ມູນຄວາມຊັດເຈນ<br>- ທາງເລືອກນີ້ແມ່ນອະນຸຍາດໃຫ້ປ່ຽນໄດ້ ແທນທີຈະຍຸບເລີກວິສາຫະກິດ ແລະ ສ້າງຕັ້ງຂຶ້ນໃໝ່<br>-ທາງເລືອກນີ້ຈະປົກປ້ອງເຈົ້າໜີ້ ຈາກການເສຍສິດຜົນປະໂຫຍດ ເລື່ອງຄວາມຮັບຜິດຊອບໜີ້ສິນ ເຊັ່ນ ໄດ້ຮັບການຊຳລະສະສາງໜີ້ສິນຢ່າງເຕັມສ່ວນ ຈາກລູກໜີ້ | - ເຮັດໃຫ້ບັນດາວິສາຫະກິດຕ້ອງຊຳລະໜີ້ສິນໃຫ້ໝົດກ່ອນທີ່ຈະປ່ຽນເປັນວິສາຫະກິດຫຸ້ນສ່ວນຈຳກັດໜີ້ສິນ ຫຼື ບໍລິສັດ ຊຶ່ງເປັນການຈຳກັດ ການຂະຫຍາຍຕົວ<br>ໂດຍສະເພາະບາງວິສາຫະກິດທີ່ບໍ່ສາມາຊຳລະໜີ້ສິນໝູນວຽນ ໄດ້ທັນໃດ<br>(ບໍ່ສາມາດຊຳລະໄດ້ຢ່າງເຕັມທີ່) |
| 4. ປ່ຽນໄດ້ແຕ່ຕ້ອງໄດ້ຮັບການ ເຫັນດີ ຈາກເຈົ້າໜີ້ກ່ອນ ເຊັ່ນ | - ທາງເລືອກນີ້ອາດຈະເຮັດໃຫ້ເກີດຄວາມຈະແຈ້ງໃຫ້ແກ່ບັນດາວິສາຫະກິດ | - ບາງວິສາຫະກິດ (ໂດຍສະເພາະວິສາຫະກິດ ນ້ອຍ) ຈະໄດ້ຮັບຄວາມຫຍຸ້ງຍາກ ໃນການ |

| | | |
|---|---|---|
| ຈາກທະນາຄານ, ຜູ້ໃຫ້ກູ້ຢືມ... | ແລະ ເຈົ້າໜ້າທີ່ໃນການຈັດຕັ້ງປະຕິບັດ<br>- ຫຼຸດເວລາໃນການຊອກຫາຂໍ້ມູນຄວາມຊັດເຈນ<br>- ທາງເລືອກນີ້ແມ່ນອະນຸຍາດໃຫ້ປ່ຽນໄດ້ ແທນທີ່ຈະຍຸບເລີກວິສາຫະກິດ ແລະ ສ້າງຕັ້ງຂຶ້ນໃໝ່ ຫຼື ຕ້ອງຊໍາລະສະສາງໜີ້ສິນທັງໝົດ.<br>- ມັນຈະເປັນການປົກປ້ອງເຈົ້າໜີ້ ເພາະເຈົ້າໜີ້ມີສິດເລືອກໄດ້ວ່າຈະເຫັນດີ ຫຼື ບໍ່ເຫັນດີ ໃນການປ່ຽນຮູບການ ຫຼື ຮູບແບບ | ເຫັນດີຈາກເຈົ້າໜີ້ |

| **ພາກທີ 5 ການສະເໜີ** | |
|---|---|
| **5.1** ສະຫຼຸບທາງເລືອກທີ່ຕ້ອງການ<br>**5.3** ເຫດຜົນສໍາຫຼັບທາງເລືອກທີ່ຕ້ອງການ | **1. ການເລີ່ມຕົ້ນດໍາເນີນທຸລະກິດມີຄວາມຊັກຊ້າ ຍ້ອນສາເຫດຈາກຕາປະທັບຂອງວິສາຫະກິດ**<br>ການສະເໜີຂອງທາງເລືອກນີ້ ແມ່ນເພື່ອປັບປຸງກົດໝາຍໃຫ້ຈະແຈ້ງ ໃຫ້ກະຊວງປ້ອງກັນຄວາມສະຫງົບມີໜ້າທີ່ອະນຸຍາດຄວັດຕາປະທັບ ແລະ ໄລຍະເວລາໃນການຄວັດຕາປະທັບແມ່ນ 05 ວັນ. ເຊິ່ງມັນຈະສ້າງຄວາມປັບປ່ຽນ (ຍືດຍຸ່ນ) ໃຫ້ແກ່ນັກລົງທຶນ, ຫຼຸດຂັ້ນຕອນກໍານົດເວລາຂອງການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ເພີ່ມປະສິດທິພາບໃນການແຂ່ງຂັນ.<br><br>**2. ການອອກໃບທະບຽນວິສາຫະກິດ ໂດຍບໍ່ໄດ້ຮັບເລກປະຈໍາຕົວຜູ້ເສຍອາກອນພ້ອມ**<br>ກະສະເໜີທາງເລືອກນີ້ແມ່ນຂະແໜງການ ອຸດສາຫະກໍາ ແລະ ການຄ້າ ເປັນຜູ່ຂໍເລກປະຈໍາຕົວຜູ່ເສຍອາກອນ ຈາກຂະແໜງສ່ວຍສາອາກອນ (ກະຊວງການເງິນ) ແລ້ວໃຫ້ ຂະແໜງການດັ່ງກ່າວສົ່ງເລກປະຈໍາຕົວຜູ່ເສຍອາກອນມາໃຫ້ ພາຍໃນ 10 ວັນ ຊຶ່ງຈະເປັນການຫຼຸດເວລາ ແລະ ຄ່າໃຊ້ຈ່າຍ ໃນການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ການຂໍເລກປະຈໍາຕົວຜູ່ເສຍອາກອນ ເນື່ອງຈາກວ່າ ການປະກອບເອກະສານທີ່ຫຼຸດລົງ ແລະ ການໄປພົວພັນພຽງຈຸດດຽວ, ຊຶ່ງສົ່ງຜົນໃຫ້ຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດແມ່ນ ໄວຂຶ້ນ ແລະ ງາຍຂຶ້ນ. ທາງເລືອກນີ້ຈະເພີ່ມປະສິດທິພາບໃນການແຂ່ງຂັນ ແລະ ຫຼຸດຄ່າໃຊ້ຈ່າຍໃຫ້ແກ່ນັກລົງທຶນ.<br><br>**3. ຜູ່ລົງທຶນ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງ ອຄ ຍັງຂາດຂໍ້ມູນທີ່ຄົບຖ້ວນ ກ່ຽວກັບນະໂຍບາຍການສ້າງຕັ້ງທຸລະກິດ ທີ່ຢູ່ໃນບັນຊີຄວບຄຸມ ທີ່ຕິດພັນກັບກະຊວງອື່ນ**<br>ການສະເໜີທາງເລືອກນີ້ ແມ່ນເພື່ອປັບປຸງກົດໝາຍ ເພື່ອຮ້ອງຂໍໃຫ້ຂະແໜງການຕ່າງໆ ສະໜອງຂໍ້ມູນໃຫ້ແກ່ຂະແໜງການ ອຸດສາຫະກໍາ ແລະການຄ້າ ທີ່ກ່ຽວພັນກັບການອະນຸຍາດໃບທະບຽນວິສາຫະກິດ, ລວມທັງ ເອກະສານຕ່າງໆ, ທຶນຈົດທະບຽນ, ຂັ້ນຕອນ, ເວລາ, ຄ່າໃຊ້ຈ່າຍ ແລະ ຂະແໜງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງການເຜີຍແຜ່ຂໍ້ມູນດັ່ງກ່າວ. ທາງເລືອກນີ້ຈະຊ່ວຍປັບປຸງ ການເກັບກໍາຂໍ້ມູນ ແລະ ການແຜ່ກະຈາຍ ທັງຍັງໃຫ້ຂໍ້ມູນທີ່ເປັນເອກະພາບ ແລະ ຖືກຕ້ອງ ແກ່ນັກລົງທຶນ ຊຶ່ງຊ່ວຍຫຼຸດເວລາ ທີ່ບໍ່ຈໍາເປັນ ຂອງການແຈ້ງຂຶ້ນທະບຽນວິສາຫະກິດລົງ.<br><br>**4. ຍັງເກີດຄວາມສັບສົນ ກ່ຽວກັບບັນຫາວິສາຫະກິດໃດ ທີ່ຕ້ອງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງອຸດສາຫະກໍາ ແລະ ການຄ້າ**<br>ການສະເໜີທາງເລືອກນີ້ ແມ່ນເພື່ອປັບປຸງກົດໝາຍ ແລະ ສະແດງໃຫ້ຮູ້ວ່າບາງປະເພດທຸລະກິດແມ່ນບໍ່ຕ້ອງການ(ບໍ່ຈໍາເປັນ)ຂຶ້ນທະບຽນວິສາຫະກິດ ແລະ ສະໜອງຂໍ້ມູນລາຍລະອຽດໄວ້ໃນລະບຽບການສະເພາະ. ຊຶ່ງເປັນການປັບປ່ຽນ ໃຫ້ບັນດາທູລະກິດບໍ່ຈໍາເປັນຕ້ອງນຂຶ້ນທະບຽນວິສາຫະກິດ ຢູ່ກະຊວງ ອຸດສາຫະກໍາ ແລະ ການຄ້າ, ໃນຂະນະດຽວກັນກໍຍັງບໍ່ໄດ້ກໍານົດເງື່ອນໄຂຕໍ່ວິສາຫະກິດ ແລະ ລັດຖະບານ. |

| | |
|---|---|
| | **5. ວິສາຫະກິດທີ່ເລີ່ມດຳເນີນທຸລະກິດ ໂດຍຈຳເປັນຕ້ອງຜ່ານການກວດສອບມາດຕະຖານ/ ຄວາມຕ້ອງການຂອງພາກສ່ວນກ່ຽວຂ້ອງ**<br>ການສະເໜີທາງເລືອກນີ້ ແມ່ນເພື່ອປັບປຸງກົດໝາຍ ເພື່ອສ້າງຄວາມຈະແຈ້ງໃຫ້ຮູ້ວ່າບາງປະເພດ ທຸລະກິດຈະຕ້ອງໄດ້ໄປກວດສອບມາດຕະຖານ ພາຍໃຕ້ລະບຽບກົດໝາຍທີ່ກ່ຽວຂ້ອງ ກ່ອນການເລີ່ມຕົ້ນ ດຳເນີນທຸລະກິດ ຊຶ່ງຈະບັນລຸວັດຖຸປະສົງໃນການຫຼຸດຜ່ອນຄວາມສ່ຽງ ແລະ ໃນຂະນະດຽວກັນກໍບໍ່ໄດ້ ກຳນົດເງື່ອນໄຂເພີ່ມເຕີມ ຈາກວິສາຫະກິດ ແລະ ລັດຖະບານ.<br>**6. ຍັງຂາດຂໍ້ມູນທີ່ຊັດເຈນ ໃນການປ່ຽນຮູບການ ຫຼື ຮູບແບບວິສາຫະກິດຈາກວິສາຫະກິດທີ່ ຮັບຜິດຊອບຕໍ່ໜີ້ສິນບໍ່ຈຳກັດ ມາເປັນວິສາຫະກິດທີ່ຮັບຜິດຊອບໜີ້ສິນຈຳກັດ**<br>ການສະເໜີທາງເລືອກນີ້ເພື່ອປັບປຸງກົດໝາຍ ເພື່ອອະນຸຍາດ ການປ່ຽນຮູບການ ຫຼື ຮູບແບບ ຂອງວິສາຫະກິດ ຈາກຄວາມຮັບຜິດຊອບໜີ້ສິນບໍ່ຈຳກັດ ມາເປັນຄວາມຮັບຜິດຊອບໜີ້ສິນຈຳກັດ ແຕ່ຕ້ອງຢູ່ໃນກໍລະນີທີ່ ໄດ້ຊຳລະສະສາງໜີ້ສິນຄົບຖ້ວນກ່ອນ. ທາງເລືອກນີ້ ແມ່ນສ້າງຄວາມຈະແຈ້ງ ໃຫ້ແກ່ນັກລົງທຶນ ແລະ ເຈົ້າໜ້າທີ່ ຂະແໜງການ ອຸດສາຫະກຳ ແລະ ການຄ້າ ຊຶ່ງຈະສ້າງຜົນປະໂຫຍດ ສູງສຸດໃຫ້ບັນດາຫົວໜ່ວຍວິສາຫະກິດມີການຂະຫຍາຍຕົວໄດ້ ແລະ ກໍ່ເປັນການປົກປ້ອງເຈົ້າໜີ້ເຊັ່ນ ດຽວກັນ. (ຈຸດປະສົງເພື່ອສະເໜີໃຫ້ກະຊວງຍຸຕິທຳໃຫ້ພິຈາລະນາ) |
| **5.2** ຄາດຄະເນຄ່າໃຊ້ຈ່າຍໃນການປະຕິບັດຕາມລະບຽບການ/ບໍລິຫານຂອງທາງເລືອກທີ່ຕ້ອງການ | ເປົ້າໝາຍຂອງບັນດາທາງເລືອກ ແມ່ນມີຈຸດປະສົງເພື່ອຈະຫຼຸດຜ່ອນຜົນກະທົບຕ່າງໆຕໍ່ຫົວໜ່ວຍ ວິສາຫະກິດທີ່ຕິດພັນກັບຂະບວນການ ການແຈ້ງຂຶ້ນທະບຽນວິສາຫະກິດ<br>ຕໍ່ກັບບັນຫາຕ່າງໆແມ່ນໄດ້ນຳໃຊ້ບັນດາທາງເລືອກເຂົ້າມາເພື່ອຫຼຸດຜ່ອນ ຫຼື ຮັກສາຄ່າໃຊ້ຈ່າຍ ໃຫ້ສອດຄ່ອງກັບການດຳເນີນທຸລະກິດ<br>ຂອງແຕ່ລະບັນຫາທີ່ກ່າວມາຂ້າງເທິງນັ້ນເພື່ອຫຼຸດ ຫຼື ບໍ່ໃຫ້ເກີນ ຄ່າໃຊ້ຈ່າຍໃນການປະຕິບັດ ລະບຽບການ, ສຳລັບຄ່າໃຊ້ຈ່າຍບໍລິຫານຂອງທາງເລືອກທີ່ຕ້ອງແມ່ນເພີ່ມຂຶ້ນເລັກນ້ອຍ. |
| **5.4** ຈຸດສຸມທຸລະກິດຂະໜາດນ້ອຍ | ໃນການປັບປຸງບັນດາຂອດຂັ້ນ ແລະ ຂະບວນການຂອງບັນດາທາງເລືອກໃນການປະຕິບັດ ລະບຽບການ ແລະ ບໍລິຫານຂອງທາງເລືອກທີ່ຕ້ອງການແມ່ນມັນຈະມີຜົນກະທົບດ້ານດີໃຫ້ ແກ່ທຸລະ ກິດຂະໜາດນ້ອຍ ແລະ ກາງ ພ້ອມດຽວກັນນັ້ນລັດຖະບານຄວນມີມາດຕະການກ່ຽວກັບບັນຫາ ດັ່ງກ່າວນີ້ |
| **ພາກທີ 6 ຜູ້ທີ່ມີສ່ວນກ່ຽວຂ້ອງແລະການປຶກສາຫາລືທີ່ສຳຄັນ** | |
| **6.1** ຄຳເຫັນຂອງຜູ້ທີ່ມີສ່ວນກ່ຽວຂ້ອງກ່ຽວກັບນິຕິກຳທີ່ສະເໜີ | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແມ່ນສືບຕໍ່ພົວພັນກັບພາກເອກະຊົນ ແລະ ຫ້ອງການ ເຈົ້າໜ້າທີ່ທະບຽນວິສາຫະກິດ ກ່ຽວກັບບັນຫາການແຈ້ງຂຶ້ນທະບຽນວິສາຫະກິດທີ່ຜ່ານມາ.<br>ໄດ້ປຶກສາຫາລື ກັບກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບບັນຫາຄວາມຊັກຊ້າໃນການເລີ່ມຕົ້ນ ທຸລະກິດ ເນື່ອງມາຈາກ ການຄວັດຕາປະທັບ. ກະຊວງປ້ອງກັນຄວາມສະຫງົບ ແມ່ນຍອມຮັບວ່າຍັງມີ ຄວາມຊັກຊ້າໃຊ້ໄລຍະເວລາຍາວ ແລະ ເຫັນດີ ກ່ຽວກັບການອອກອະນຸຍາດຄວັດຕາປະທັບໃຫ້ໄວຂຶ້ນ ພາຍໃນ 5 ວັນ.<br>ໄດ້ປຶກສາຫາລື ກັບກົມສ່ວຍສາອາກອນ (ກະຊວງການເງິນ) ຊຶ່ງກົມສ່ວຍສາອາກອນເຫັນດີ ກ່ຽວກັບຂັ້ນຕອນການອອກໃບທະບຽນວິສາຫະກິດ ພ້ອມດ້ວຍເລກລະຫັດປະຈຳຕົວຜູ້ເສຍອາກອນ ພ້ອມກັນ, ເຖິງຢ່າງໃດກໍຕາມ ກົມສ່ວຍສາອາກອນ ຕ້ອງການແກ້ໄຂບັນຫາດັ່ງກ່າວໃນອະນາຄົດ ເນື່ອງຈາກວ່າ ຕ້ອງການເວລາໃນການປັບປຸງລະບົບເຊີເວີ (SERER) ໃນປັດຈຸບັນກ່ອນ ແລະ ກົມສ່ວຍ ສາອາກອນຕ້ອງການປັບປຸງລະບົບເຊີເວີ (SERER) ເພື່ອທີ່ຈະເຊື່ອມຕໍ່ (Link) ກັບຂະແໜງການ ອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການແຜນການ ແລະ ການລົງທຶນ.<br>ກອງປະຊຸມປຶກສາຫາລື ລະຫວ່າງພາກລັດ ແລະ ເອກະຊົນ ລາວ - ຍີ່ປຸ່ນ ແມ່ນໄດ້ປຶກສາຫາລືບັນຫາ ດັ່ງກ່າວຄືກັນ ຊຶ່ງໄດ້ມີຄວາມເຫັນວ່າ ລະບົບການແຈ້ງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ຍັງບໍ່ທັນມີການປັບປຸງໃຫ້ດີຂຶ້ນ ຍິ່ງໄປກວ່ານັ້ນການສ້າງຕັ້ງວິສາຫະກິດ ໃນລະບົບປະຕູດຽວ ຍັງບໍ່ |

| | |
|---|---|
| | ທັນດີເທົ່າທີ່ຄວນ ເຊັ່ນ ນັກລົງທຶນຍັງຕ້ອງໄດ້ໄປກະຊວງການເງິນ ເພື່ອທີ່ຈະໄປເອົາເລກປະຈຳຕົວຜູ່ເສຍອາກອນ ທີ່ກະຊວງການເງິນ. ຕໍ່ກັບບັນຫາດັ່ງກ່າວນີ້ ມັນຮຽກຮ້ອງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ອອກເລກປະຈຳຕົວຜູ່ເສຍອາກອນ ພ້ອມກັບໃບທະບຽນວິສາຫະກິດເລີຍ ໂດຍອີງຕາມ ມາດຕາ 19 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. |
| **ພາກທີ 7 ການປະເມີນຜົນທົ່ວໄປ** | |
| **7.1** ຄວາມສຳຄັນຂອງການສະເໜີນິຕິກຳ | ນິຕິກຳທີ່ສະເໜີແມ່ນມີຄວາມສຳຄັນຫຼາຍຕໍ່ທຸລະກິດຍ້ອນເປັນການຊຸກຍູ້ພາກສ່ວນທຸລະກິດໃຫ້ມີການຂະຫຍາຍຕົວນັບມື້ນັບຫຼາຍຂຶ້ນ ແລະ ນິຕິກຳດັ່ງກ່າວຍັງມີການພົວພັນກັບຫຼາຍຂະແໜງ ການ ທັງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ຫຼຸດຜ່ອນບັນຫາຕໍ່ຜູ້ທີ່ມີສ່ວນກ່ຽວຂ້ອງທີ່ຖືກຜົນກະທົບ |
| **7.2** ການສະເໜີກ່ຽວກັບຜົນກະທົບຂອງລະບຽບກົດໝາຍ **(RIS)** | ເນື່ອງຈາກຜົນກະທົບຂອງທຸລະກິດແມ່ນມີຈຳນວນຫຼາຍ, ຊຶ່ງອາດຈະຄວນເຮັດໃຫ້ RIS ສຳເລັດ |
| **7.3** ຂໍ້ມູນຂ່າວສານອື່ນໆ | ເນື່ອງຈາກ ມີຄວາມຮີບດ່ວນໃນການແນະນຳປັບປຸງກົດໝາຍວ່າດ້ວຍວິສາຫະກິດ ສະນັ້ນ ຈຶ່ງເຮັດໃຫ້ບໍ່ສາມາດຄົ້ນຄວ້າກ່ຽວກັບຜົນກະທົບຂອງບົດປະເມີນນີ້ໄດ້ຕາມວັດຖຸປະສົງ. |
| **ພາກທີ 8 ການສົ່ງເສີມການປະຕິບັດຕາມລະບຽບການ** | |
| **8.1** ການຍົກສູງຄວາມຕື່ນຕົວແລະສົ່ງເສີມການປະຕິບັດຕາມລະບຽບການ | ກະຊວງອຸດສາຫະກຳ ແລະ ການຄ້າ ມີຄວາມຮັບຜິດໃນການເຜີຍແຜ່ວຽກງານກ່ຽວກັບການສ້າງຕັ້ງວິສາຫະກິດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ເອກຊົນ ເພື່ອເຮັດໃຫ້ທຸກພາກສ່ວນເຂົ້າໃຈກ່ຽວກັບບັນຫາດັ່ງກ່າວຢ່າງຈະແຈ້ງ ແລະ ງ່າຍດາຍ ເປັນຕົ້ນແມ່ນເຈົ້າຂອງທຸລະກິດທີ່ເປັນເພດຍິງເພື່ອໃຫ້ເຂົາເຂົ້າໃຈງ່າຍ ແລະ ສາມາດເຂົ້າເຖິງເຄື່ອງມືການປະຕິບັດທາງດ້ານໆ ກ່ຽວກັບການເລີ່ມຕົ້ນທຸລະກິດໃຫ້ນັບມື້ນັບຫຼາຍຂຶ້ນ. |
| **ພາກທີ 9 ການທົບທວນຄືນ** | |
| **9.1** ການທົບທວນຄືນຫຼັງການຈັດຕັ້ງປະຕິບັດ | ຄວນມີການທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດໃນພາຍໃນ ສອງປີ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບໃໝ່) |